Delete and use school letterhead

Delete and type date

Delete and type parent/carer name and address

## ການຊັບຊ້ອນເຂົ້າຮຽນຫ້ອງ 7 ສຳລັບປີໜ້າ

**PLACEMENT IN YEAR 7 NEXT YEAR**

ຊື່ນັກຮຽນ: Delete and type name of student

ສົກປີສຳລັບການຊັບຊ້ອນເຂົ້າຫ້ອງ Year 7: Delete and type calendar year for placement in Year 7

ວັນທີທີ່ຕ້ອງສົ່ງ *ໃບຄຳຮ້ອງຂໍຈົດຊື່:* Delete and type date for return of Application to enrol

ເລກໂທຣະສັບຂອງໂຮງຮຽນຖ້າທ່ານຕ້ອງການຄວາມຊ່ວຍເຫຼືອ: Delete and type school telephone number

ຮຽນພໍ່ແມ່/ຜູ້ປົກຄອງທີ່ນັບຖື

ຂ້າພະເຈົ້າຂໍຂອບໃຈທີ່ທ່ານໄດ້ ຍື່ນສເນີຂໍບ່ອນເຂົ້າຮຽນຫ້ອງ Year 7 ທີ່ໂຮງຮຽນນີ້ ສຳລັບລູກຂອງທ່ານ, ຊຶ່ງມີຊື່ດັ່ງຂ້າງເທິງນີ້.

ອີງຕາມໃບຄຳຮ້ອງຂອງທ່ານ, ເຮົາໄດ້ພົບວ່າມີຊື່ຂອງລູກທ່ານຢູ່ໃນບັນຊີລາຍຊື່ນັກຮຽນທີ່ໄດ້ຈົດຊື່ຂໍເຂົ້າຮຽນທີ່ໂຮງຮຽນແຫ່ງນີ້ ສຳລັບ ສົກຮຽນປີໜ້າ. ດັ່ງທີ່ທ່ານຮູ້ແລ້ວວ່າ ການຍື່ນຄຳຮ້ອງຈົດຊື່ຂໍເຂົ້າຮຽນຂອງລູກທ່ານຈະບໍ່ສົມບູນລົງໄດ້ ຈົນກວ່າທາງໂຮງຮຽນຈະໄດ້ຮັບ ໃບຄຳຮ້ອງທີ່ຂຽນຕື່ມແລ້ວ ຮຽບຮ້ອຍຈາກທ່ານເສັຍກ່ອນ.

ຖ້າທ່ານຕ້ອງການຢາກດຳເນີນເຣື່ອງຍື່ນສເນີຄຳຮ້ອງຂໍຈົດຊື່ເຂົ້າຮຽນໃຫ້ຖືກຕ້ອງ ຢ່າງເປັນທາງການ, ກະຣຸນາຂຽນຕື່ມ *ໃບຄຳຮ້ອງຈົດຊື່ຂໍເຂົ້າຮຽນໃນໂຮງຮຽນ ຫຼວງຂອງຣັດ NSW (Application to enrol in a NSW government school)* ໂດຍ ໃຫ້ຕື່ມເປັນພາສາ **ອັງກິດ** ແລະໃຫ້ສົ່ງໃບຄຳຮ້ອງຄືນນີ້ ມາໃຫ້ຂ້າພະເຈົ້າພາຍໃນວັນທີ ທີ່ບົ່ງໄວ້ຂ້າງເທິງນີ້.

ທ່ານຈະສັງເກດເຫັນວ່າຟອມນີ້ ພວກເຮົາໄດ້ຕື່ມໄວ້ໃຫ້ແລ້ວເປັນສ່ວນໃຫຍ່. ຂໍ້ມູນນີ້ພວກເຮົາມີໄວ້ຢູ່ແລ້ວໃນລະບົບຄອມພິວເຕີທີ່ບັນທຶກຂໍ້ມູນຂອງລູກທ່ານ.

1. ຂໍໃຫ້ກວດເບິ່ງຂໍ້ມູນທີ່ພິມໄວ້ແລ້ວແລະໃຫ້ກວດແກ້ສິ່ງໃດທີ່ບໍ່ຖືກ.
2. ຂໍໃຫ້ຕື່ມຂໍ້ມູນໃດໆທີ່ຍັງຂາດຢູ່
3. ໃຫ້ໝັ້ນໃຈວ່າທ່ານໄດ້ຕອບທຸກຄໍາຖາມທີ່ຈໍາເປັນຕ້ອງຕອບແລະເຊັນໃສ່ໃບຄໍາຮ້ອງນີ້ດ້ວຍ.

ໂປຼດສັງເກດດ້ວຍວ່າ:

- ເປັນຂໍ້ບັງຄັບທີ່ທ່ານຕ້ອງໄດ້ຕອບທຸກຄໍາຖາມທີ່ຂຽນຖາມໄວ້ຢູ່ໃນໃບຄໍາຮ້ອງ ຍົກເວັ້ນຂໍ້ທີ່ຖາມກ່ຽວກັບອາຊີບແລະການສຶກສາຂອງທ່ານ.
- ຖ້າເຮົາບໍ່ໄດ້ຮັບໃບຄໍາຮ້ອງຂໍຈົດຊື່ເຂົ້າຮຽນຈາກທ່ານພາຍໃນວັນທີ ທີ່ບົ່ງໄວ້ຂ້າງເທິງແລ້ວ ເຮົາຈະຖືວ່າທ່ານໝົດຄວາມສົນໃຈແລ້ວ ແລະຈະເປີດໂອກາດໃຫ້ນັກຮຽນຄົນອື່ນທີ່ສເນີຂໍເອົາບ່ອນດັ່ງກ່າວແທນ.
- ຖ້າທ່ານຍື່ນໃບຄໍາຮ້ອງນີ້ແລ້ວ ແຕ່ວ່າປ່ຽນໃຈໃນພາຍຫຼັງ, ຫຼືສະພາບການຂອງທ່ານປ່ຽນແປງແລະທ່ານບໍ່ປະສົງຢາກດໍາເນີນຂໍອີກຕໍ່ໄປ, ກະຣຸນາຕິດຕໍ່ ໂຮງຮຽນໂດຍດ່ວນທີ່ສຸດເພື່ອວ່າເຮົາຈະສາມາດຕິດຕໍ່ນັກຮຽນຄົນອື່ນທີ່ມີຊື່ຢູ່ໃນບັນຊີລໍຖ້າໄດ້.

ໃບຄໍາຮ້ອງຂອງທ່ານຈະຖືກດໍາເນີນແລະພິຈາຣະນາຢ່າງບໍ່ຊັກຊ້າ. ຖ້າວ່າຄໍາຮ້ອງຂອງທ່ານຖືກຮັບເອົາ, ເຮົາຈະສົ່ງຄໍາຕອບໃຫ້ທ່ານຮູ້ຢ່າງເປັນທາງການ ວ່າລູກຂອງທ່ານໄດ້ບ່ອນແລ້ວ. ບາງທີ ເຮົາອາດຕ້ອງໄດ້ຕິດຕາມຂໍຂໍ້ມູນບາງຢ່າງເພີ້ມຕື່ມຈາກຂໍ້ມູນທີ່ທ່ານຂຽນໄວ້ແລ້ວໃນໃບຄໍາຮ້ອງ. ໃນກໍຣະນີນີ້ ເຮົາຈະຕິດຕໍ່ມາຫາທ່ານອີກ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຕື່ມ *Application to enrol in a NSW government school* ກະຣຸນາຕິດຕໍ່ໂຮງຮຽນປະຖົມ ໃນເຂດທ້ອງຖິ່ນຂອງທ່ານ, ຫຼື ໂທຣະສັບຫາພວກເຮົາເພື່ອຂໍນັດພົບໂອ້ລົມກັບພະນັກງານ ຂອງໂຮງຮຽນ ມັທຍົມຂອງເຮົາກໍໄດ້. ຖ້າທ່ານຕ້ອງການນາຍພາສາ, ທ່ານກໍສາມາດໂທຣະສັບຫາຜແນກແປພາສາທາງໂທຣະສັບໄດ້ ທີ່ໝາຍເລກ 131 450 ແລະຂໍເອົານາຍພາສາທີ່ປາກພາສາລາວ. ນາຍພາສາຈະ ໂທຣະສັບຫາໂຮງຮຽນໃຫ້ແລະຈະຢູ່ກັບສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານບໍ່ຕ້ອງເສັຍຄ່າໃຊ້ຈ່າຍໃດໆໃນການໃຊ້ບໍຣິການນີ້.

ຂໍຂອບໃຈທີ່ໃຫ້ຄວາມຊ່ວຍເຫຼືອໃນຄັ້ງນີ້.

ດ້ວຍຄວາມຮັກແພງແລະນັບຖື

ຄຣູໃຫຍ່

Principal